

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ........... ໜ້າ 01-06

II. ການເຄື່ອນໄຫວຂອງການນຳຂັ້ນສູງ………………………………………………….. ໜ້າ 07 -09

III. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ................................................. ໜ້າ 10-15


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກຸມພາ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງ ບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 09/02/2023, ທ່ານ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ພົບປະທາງໄກກັບ ທ່ານ Fumio Kishida, ປະທານພັກເສລີປະຊາທິປະໄຕ, ນາຍົກລັດຖະມົນຕີຍີ່ປຸ່ນ ໃນທ່າມກາງບັນຍາກາດຂອງການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດຫວຽດນາມ-ຍີ່ປຸ່ນ ຄົບຮອບ 50 ປີ. ທ່ານ ຫງວຽນ ຟູຈ້ອງ ໄດ້ຕີລາຄາສູງຕໍ່ການປະກອບສ່ວນຂອງຍີ່ປຸ່ນຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງຫວຽດນາມ; ຍີ່ປຸ່ນ ເປັນຄູ່ຮ່ວມມືດ້ານເສດຖະກິດ, ການຄ້າ, ລົງທຶນ, ແຮງງານ ອັນດັບຕົ້ນຂອງຫວຽດນາມ, ໃຫ້ການຊ່ວຍເຫຼືອລ້າແກ່ຫວຽດນາມຫຼາຍທີ່ສຸດ. ສອງຝ່າຍເຫັນດີເພີ່ມທະວີການພົວພັນທາງດ້ານການເມືອງໂດຍຮັກສາການຢ້ຽມຢາມ, ພົບປະຂັ້ນສູງ ແລະ ຂັ້ນຕ່າງໆ ຢ່າງເປັນປົກກະຕິ; ເສີມຂະຫຍາຍກົນໄກການຮ່ວມມື ແລະ ປຶກສາຫາລືສອງຝ່າຍດ້ວຍຫຼາຍຮູບແບບ; ຊຸກຍູ້ການພົວພັນລະຫວ່າງພັກກອມມູນິດຫວຽດນາມ ກັບ ພັກເສລີປະຊາທິປະໄຕຍີ່ປຸ່ນ ລະຫວ່າງສອງລັດຖະບານ, ສອງສະພາແຫ່ງຊາດ. ນອກນີ້, ໄດ້ສະເໜີໃຫ້ຍີ່ປຸ່ນສືບຕໍ່ໃຫ້ການຮ່ວມມື, ສະໜັບສະໜູນຫວຽດນາມ ໃນການຈັດຕັ້ງປະຕິບັດການຫັນປະເທດເປັນອຸດສາຫະກຳທີ່ທັນສະໄໝ, ເພີ່ມທະວີການເຊື່ອມໂຍງທາງດ້ານເສດຖະກິດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການເງິນ, ພະລັງງານ, ສະບຽງອາຫານ, ຍູ້ແຮງການຄ້າ-ການລົງທຶນ, ກະສິກຳ, ພັດທະນາຊົນນະບົດ, ກໍ່ສ້າງຊັບພະຍາກອນມະນຸດ, ພື້ນຖານໂຄງລ່າງ, ວິທະຍາສາດ-ເຕັກໂນໂລຊີ ແລະ ອື່ນໆ.

ວັນທີ 08-11/02/2023, ທ່ານ ຟາມ ມິງຈິງ, ນາຍົກລັດຖະມົນຕີຫວຽດນາມ ໄດ້ເດີນທາງຢ້ຽມຢາມສິງກະໂປ ແລະ ບຣູໄນ ຢ່າງເປັນທາງການ. ການຢ້ຽມຢາມສອງປະເທດໃນຄັ້ງນີ້, ສສ ຫວຽດນາມ ໄດ້ລົງເລິກການພົວພັນຮ່ວມມືທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ ແລະ ການໄປມາຫາສູ່ຂອງປະຊາຊົນ. ການຢ້ຽມຢາມສິງກະໂປ ຖືເປັນການຢ້ຽມຢາມໃນຮອບ 5 ປີຂອງນາຍົກລັດຖະມົນຕີຫວຽດນາມ ແລະ ເຂົ້າຮ່ວມສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດຫວຽດນາມ-ສິງກະໂປ ຄົບຮອບ 50 ປີ ແລະ ວັນສ້າງຕັ້ງການພົວພັນຮ່ວມມືຍຸດທະສາດຄົບຮອບ 10 ປີ, ຊຶ່ງ ສອງຝ່າຍ ເຫັນວ່າຍູ້ແຮງການຮ່ວມມືບົນພື້ນຖານເສດຖະກິດດິຈິຕອນ ແລະ ຍູ້ແຮງການຮ່ວມມືໃນຫຼາຍຂົງເຂດໃໝ່ ຄື: ຄວາມປອດໄພທາງເຄືອຂ່າຍອິນເຕີເນັດ, ຂໍ້ມູນຂ້າມຊາຍແດນ, ນະຄອນອັດສະລິຍະ, ປ່ຽນແປງໃໝ່ປະດິດຄິດສ້າງ, ປັນຍາປະດິດ ແລະ ການຊຳລະທາງເຕັກນິກດິຈິຕອນ. ສິງກະໂປ ຍັງສະເໜີຮ່ວມມືກັບຫວຽດນາມໃນຂົງເຂດພະລັງງານທົດແທນ, ໃບຢັ້ງຢືນການປ່ອຍຄາໂບນິກກາກບອນ ແລະ ພື້ນຖານໂຄງລ່າງແບບຍືນຍົງດ້ວຍເປົ້າໝາຍບັນລຸລະດັບປ່ອຍຄາໂບນິກກາກບອນລົງເປັນ 0 ໃນປີ 2050. ພ້ອມນີ້, ສອງຝ່າຍໄດ້ລົງນາມ MOU ຮ່ວມກັນກ່ຽວກັບເສດຖະກິດດິຈິຕອນ ແລະ ຄູ່ຮ່ວມມືສີຂຽວ. ສຳລັບການຢ້ຽມຢາມບຣູໄນ ຖືວ່າເປັນການຢ້ຽມຢາມໃນຮອບ 15 ປີ ຂອງນາຍົກລັດຖະມົນຕີຫວຽດນາມ. ສອງຝ່າຍໄດ້ລົງນາມຮ່ວມກັນກ່ຽວກັບແຜນຂະຫຍາຍການພົວພັນຮ່ວມມືຮອບດ້ານຫວຽດນາມ-ບຣູໄນ ໄລຍະປີ 2023-2027.

ວັນທີ 15/02/2023, ທ່ານ ຟາມ ມິງຈິງ, ນາຍົກລັດຖະມົນຕີຫວຽດນາມ ໄດ້ຕ້ອນຮັບ ທ່ານ Jens Ruebbert, ຮອງປະທານສະພາວິສາຫະກິດເອີຣົບ-ອາຊຽນ ແລະ ທ່ານ Alan Cany, ປະທານການຄ້າເອີຣົບ ປະຈຳ ສສ ຫວຽດນາມ ເພື່ອປຶກສາຫາລືບັນດາມາດຕະການຊຸກຍູ້ການພັດທະນາທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນລະຫວ່າງ ສສ ຫວຽດນາມ ແລະ ເອີຣົບ. ທ່ານ ຟາມ ມິງຈິງ ໄດ້ຢັ້ງຢືນວ່າ ຍາມໃດ ສສ ຫວຽດນາມ ກໍສະໜັບສະໜູນການຮ່ວມມືຮອບດ້ານກັບເອີຣົບ ແລະ ການພົວພັນຮ່ວມມືຍຸດທະສາດອາຊຽນ-ເອີຣົບ, ສະເໜີໃຫ້ບັນດານັກລົງທຶນ ແລະ ວິສາຫະກິດຂອງເອີຣົບສືບຕໍ່ຜັນຂະຫຍາຍການລົງທຶນ, ສົ່ງອອກ, ການຫັນເປັນດິຈິຕອນ, ພັດທະນາພື້ນຖານໂຄງລ່າງ ແລະ ອື່ນໆ.

### 2). ພັກກອມມູນິດຈີນ

ວັນທີ 02/02/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ສົ່ງໂທລະເລກສະແດງຄວາມເສົ້າສະຫຼົດໃຈເຖິງ ທ່ານ Arif Alvi, ປະທານາທິບໍດີປາກິດສະຖານ ຕໍ່ເຫດການໂຈມຕີຂອງກຸ່ມກໍ່ການຮ້າຍທີ່ເມືອງ Peshawar, ແຂວງ Khyber Pakhtunkhwa ຂອງປາກິດ

ສະຖານ ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 100 ຄົນ. ພ້ອມທັງຖະແຫຼງວ່າ ສປ ຈີນ ຕ້ານການກໍ່ການຮ້າຍທຸກຮູບແບບ ແລະ ກ່າວປະນາມຢ່າງຮຸນແຮງຕໍ່ການກໍ່ການຮ້າຍດັ່ງກ່າວ; ສປ ຈີນ ຈະສືບຕໍ່ລົງເລິກການສະໜັບສະໜູນການຕ້ານການກໍ່ການຮ້າຍຂອງປາກິດສະຖານ, ປົກປັກຮັກສາສະຖຽນລະພາບແຫ່ງຊາດ ແລະ ຄວາມປອດໄພຂອງປະຊາຊົນ.

ວັນທີ 07/02/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ສົ່ງສານສະແດງຄວາມເຫັນໃຈເຖິງ ທ່ານ Recep Tayyip Erdogan, ປະທານາທິບໍດີຕວັກກີ ແລະ ທ່ານ Bashar al-Assad, ປະທານາທິບໍດີຊີຣີ ຕໍ່ເຫດການແຜ່ນດິນໄຫວຮຸນແຮງ ຄັ້ງວັນທີ 06 ກຸມພາ 2023. ເນື້ອໃນຂອງສານລະບຸວ່າ ຂ້າພະເຈົ້າຮູ້ສຶກເສົ້າສະຫຼົດໃຈຢ່າງຍິ່ງທີ່ຊາບຂ່າວວ່າປະເທດຂອງທ່ານເກີດແຜ່ນດິນໄຫວຮຸນແຮງ, ເຮັດໃຫ້ມີຜູ້ເສຍຊີວິດ, ບາດເຈັບ ແລະ ໄດ້ຮັບຄວາມເສຍຫາຍເປັນຈຳນວນຫຼາຍ. ຕາງໜ້າໃຫ້ລັດຖະບານ ແລະ ປະຊາຊົນຈີນ ສະແດງຄວາມໄຫວ້ອາໄລ ແລະ ເສົ້າສະຫຼົດໃຈຢ່າງສຸດຊຶ້ງຕໍ່ຜູ້ເສຍຊີວິດ, ຜູ້ບາດເຈັບ ແລະ ຄອບຄົວ. ເຊື່ອໝັ້ນວ່າພາຍໃຕ້ການນຳພາຂອງທ່ານ, ລັດຖະບານ ແລະ ປະຊາຊົນ ຈະສາມາດຜ່ານຜ່າຜົນກະທົບຈາກໄພພິບັດໃນຄັ້ງນີ້ໄປໄດ້ດ້ວຍດີ. ລັດຖະບານຈີນ ໄດ້ສົ່ງໜ່ວຍກູ້ໄພສຸກເສີນ ຈຳນວນ 82 ຄົນ ນຳເອົາອຸປະກອນ ແລະ ເຄື່ອງກູ້ໄພຈຳນວນ 21 ໂຕນ ໄປຊ່ວຍເຫຼືອ ຕວັກກີ.

ວັນທີ 10/02/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ພົບປະກັບ ທ່ານ ຮຸນແຊນ, ນາຍົກລັດຖະມົນຕີກຳປູເຈຍ. ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ສປ ຈີນ ສະໜັບສະໜູນກຳປູເຈຍ ໃນການເລືອກເອົາເສັ້ນທາງການພັດທະນາທີ່ສອດຄ່ອງກັບສະພາບການຂອງປະເທດຕົນ, ປົກປັກຮັກສາອະທິປະໄຕ, ຄວາມໝັ້ນຄົງ ແລະ ການພັດທະນາເສດຖະກິດ-ສັງຄົມ ຢ່າງໝັ້ນທ່ຽງ; ເດັດດ່ຽວຄັດຄ້ານອິດທິກຳລັງພາຍນອກແຊກແຊງເຂົ້າວຽກງານພາຍໃນຂອງຕົນ. ສປ ຈີນ ຍິນດີຮ່ວມມືກັບກຳປູເຈຍ, ຊຸກຍູ້ການພັດທະນາ. ທ່ານ ຮຸນແຊນ ກ່າວວ່າ ກຳປູເຈຍ ສະໜັບສະໜູນນະໂຍບາຍ "ປະເທດດຽວ ສອງລະບອບຂອງ ສປ ຈີນ" ເພື່ອປົກປັກຮັກສາອະທິປະໄຕ, ຄວາມໝັ້ນຄົງ ແລະ ຜົນປະໂຫຍດດ້ານການພັດທະນາ; ຄັດຄ້ານອິດທິກຳລັງໃດໆທີ່ແຊກແຊງເຂົ້າວຽກງານພາຍໃນຂອງຈີນ. ກຳປູເຈຍ ຍິນດີສືບຕໍ່ຊຸກຍູ້ການຂະຫຍາຍສາຍພົວພັນອາຊຽນ-ຈີນ ຢ່າງຕັ້ງໜ້າ, ສົ່ງເສີມຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ".

ວັນທີ 14/02/2023, ທ່ານ ສີ ຈິ້ນຜິງ ໄດ້ຕ້ອນຮັບ ທ່ານ Ebrahim Raisi, ປະທານາທິບໍດີອີຣານ ໃນໂອກາດຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ. ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ສປ ຈີນ ກັບ ອີຣານ ໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນ ຕະຫຼອດມາ, ສອງປະເທດ ມີຄວາມສາມັກຄີ ແລະ ຮ່ວມມືກັນບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ສືບຕໍ່ຊຸກຍູ້ການພົວພັນຢ່າງຮອບດ້ານຂອງສອງປະເທດໃນໄລຍະໃໝ່. ທ່ານ Raisi ໄດ້ສະເໜີໃຫ້ສອງຝ່າຍເພີ່ມທະວີການແລກປ່ຽນຄະນະຜູ້ແທນຂອງສອງຝ່າຍໃນທຸກລະດັບ, ຈັດຕັ້ງປະຕິບັດແຜນການຮ່ວມມືຢ່າງຮອບດ້ານ, ຊຸກຍູ້ການລົງທຶນຂອງວິສາຫະກິດຈີນໃນອີຣານ ແລະ ລົງເລິກການຮ່ວມມືທີ່ຕິດແທດຕົວຈິງໃນຫຼາຍຂົງເຂດ. ການຢ້ຽມຢາມຄັ້ງນີ້, ສອງຝ່າຍໄດ້ເຊັນສັນຍາຮ່ວມກັນຫຼາຍສະບັບເປັນຕົ້ນໃນຂົງເຂດເສດຖະກິດ-ການຄ້າ, ພະລັງງານ, ການຕ່າງປະເທດ, ການຂົນສົ່ງ, ກະສິກຳ, ການພັດທະນາຕົວເມືອງ ແລະ ອື່ນໆ.

**3). ພັກແຮງງານເກົາຫຼີ**

ວັນທີ 07/02/2023, ສະຫາຍ ກິມ ເຈິງອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ເປັນປະທານໃນກອງປະຊຸມຄະນະກຳມະການການທະຫານສູນກາງພັກແຮງງານເກົາຫຼີ. ກອງປະຊຸມ ໄດ້ປຶກສາຫາລື ແລະ ຕົກລົງຫຼາຍບັນຫາສຳຄັນ ໂດຍສະເພາະແມ່ນ ການກຳນົດນະໂຍບາຍທາງດ້ານປ້ອງກັນປະເທດ ແລະ ການເມືອງໃນປີ 2023; ພາລະກິດທາງການທະຫານ, ແນວທາງການເຄື່ອນໄຫວຂອງການສ້າງກອງທັບໃນໄລຍະຍາວ, ການຍົກລະດັບການຝຶກຊ້ອມຢ່າງຕໍ່ເນື່ອງ ແລະ ລຽນຕິດ ເພື່ອຮັບມືກັບສະພາບການ, ປັບປຸງທ່າກຽມພ້ອມສູ້ຮົບໃນສົງຄາມ ແລະ ຍົກລະດັບຂີດຄວາມສາມາດ

ໃນການປ້ອງກັນປະເທດ ແລະ ອື່ນໆ. ພ້ອມດຽວກັນ, ສປປ ເກົາຫຼີ ຈະຈັດກອງປະຊຸມໃຫຍ່ພັກແຮງງານເກົາຫຼີ ແລະ ພິທີສວນສະໜາມເພື່ອສະເຫຼີມສະຫຼອງການສ້າງຕັ້ງກອງທັບແຮງງານເກົາຫຼີ ຄົບຮອບ 75 ປີ.

ວັນທີ 12/02/2023, ທ່ານ ກິມ ເຈີງອຸນ, ຜູ້ນໍາສູງສຸດ ສປປ ເກົາຫຼີ ໄດ້ກ່າວໃນພິທີສະເຫຼີມສະຫຼອງວັນສ້າງຕັ້ງກອງທັບເກົາຫຼີ ຄົບຮອບ 75 ປີ ວ່າ ຄວາມຈະເລີນຮຸ່ງເຮືອງຂອງ ສປປ ເກົາຫຼີ ຂຶ້ນກັບກອງທັບທີ່ມີອໍານາດ. ໃນພິທີດັ່ງກ່າວ ໄດ້ສະແດງອາວຸດຍຸດໂທປະກອນຫຼາຍຊະນິດ ໂດຍສະເພາະລູກສອນໄຟຂ້າມທະວີບ (ICBM) ຫຼື Hwasong-17.

**4). ພັກກອມມູນິດກູບາ**

ວັນທີ 12/02/2023, ທ່ານ Miguel Díaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ຢ້ຽມຢາມເມັກຊິກ ຢ່າງເປັນທາງການ ແລະ ໄດ້ພົບປະກັບ ທ່ານ Andrés Manuel López Obrador, ປະທານາທິບໍດີເມັກຊິກ. ທ່ານ Miguel Díaz-Canel ໄດ້ຕີລາຄາສູງຕໍ່ເມັກຊິກ ໃນການສະໜັບສະໜູນກູບາ ຕະຫຼອດມາໂດຍສະເພາະແມ່ນຄວາມຫຍຸ້ງຍາກຈາກການປິດລ້ອມຂອງອາເມລິກາ, ໄພພິບັດຈາກທໍາມະຊາດ ແລະ ເຫດການໄຟໄໝ້ສາງເກັບນໍ້າມັນ; ຜ່ານມາ ເມັກຊິກ ເປັນປະເທດໜຶ່ງທີ່ໄດ້ສິ່ງວັດຖຸປັດໄຈຕ່າງໆຊ່ວຍເຫຼືອກູບາ. ກູບາ ຈະສືບຕໍ່ເພີ່ມທະວີຮັດແໜ້ນການພົວພັນຮ່ວມມືລະຫວ່າງສອງປະເທດ, ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ. ທ່ານ Andrés Manuel ໄດ້ກ່າວວ່າການຢ້ຽມຢາມຄັ້ງນີ້ມີຄວາມໝາຍສໍາຄັນຕໍ່ການພົວພັນຂອງສອງປະເທດ, ເມັກຊິກ ແລະ ກູບາ ເປັນປະເທດເພື່ອນມິດສະຫາຍອ້າຍນ້ອງທີ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຕະຫຼອດມາ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ຂົງເຂດນີ້ ມີຫຼາຍເຫດການພົ້ນເດັ່ນ ດັ່ງນີ້:

- ການເມືອງໄທ, ປັດຈຸບັນ ມີ 25 ພັກການເມືອງ ທີ່ລົງສະໝັກເລືອກຕັ້ງ, ຊຶ່ງບັນດາພັກ ໄດ້ເລີ່ມລົງຫາສຽງເພື່ອການເລືອກຕັ້ງທົ່ວໄປ ທີ່ຈະມີຂຶ້ນໃນວັນທີ 07 ພຶດສະພາ 2023 ນີ້. ໃນນັ້ນ, ພັກປະລັງປະຊາລັດ (ພັກລັດຖະບານຊຸດປັດຈຸບັນ) ໄດ້ສະເໜີຊື່ ທ່ານ ປະວິດ ວົງສຸວັນ, ປະທານພັກ, ຮອງນາຍົກລັດຖະມົນຕີ ເຂົ້າສະໝັກເລືອກຕັ້ງເປັນນາຍົກລັດຖະມົນຕີ. ສ່ວນ ທ່ານ ປະຢຸດ ຈັນໂອຊາ, ນາຍົກລັດຖະມົນຕີ ໄດ້ປະກາດເຂົ້າຮ່ວມກັບພັກລວມໄທສ້າງຊາດ ແລະ ຈະລົງສະໝັກເລືອກຕັ້ງເປັນນາຍົກລັດຖະມົນຕີ. ຄາດວ່າ ຈະມີການຍຸບສະພາ ໃນເດືອນມີນາ 2023 ນີ້ ກ່ອນຈະຈັດເລືອກຕັ້ງໃນເວລາດັ່ງກ່າວ.

-ວັນທີ 31/01/2023, ທ່ານ Lloyd Austin, ລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ເດີນທາງຢ້ຽມຢາມ ແລະ ພົບປະກັບຄູ່ຮ່ວມຕໍາແໜ່ງ ສ.ເກົາຫຼີ. ສອງຝ່າຍຕົກລົງຈະຈັດການເຈລະຈາສາມຝ່າຍຮ່ວມກັບຍີ່ປຸ່ນ ເພື່ອອໍານວຍຄວາມສະດວກໃນການແບ່ງປັນຂໍ້ມູນໃນການພັດທະນານິວເຄຼຍ ແລະ ລູກສອນໄຟ ຂອງ ສປປ ເກົາຫຼີ; ປຶກສາຫາລືກ່ຽວກັບການຊ້ອມຮົບຈໍາລອງສະຖານະການໄພຂົ່ມຂູ່ດ້ານນິວເຄຼຍ ຈາກ ສປປ ເກົາຫຼີ ໃນເດືອນກຸມພາ ແລະ ຂະຫຍາຍລະດັບການຊ້ອມຮົບທາງການທະຫານໃນປີ 2023. ວັນທີ 01/02/2023, ທ່ານ Lloyd Austin ໄດ້ຢ້ຽມຢາມຟີລິບປິນ, ສອງຝ່າຍໄດ້ເປັນເອກະພາບກ່ຽວກັບນະໂຍບາຍອິນໂດ-ປາຊີຟິກ, ທັງໄດ້ຢ້ຽມຢາມຖານທັບ Navarro ຂອງອາເມລິກາ ຢູ່ແຂວງ Mindanao ຂອງຟີລິບປິນ. ຕໍ່ການເຄື່ອນໄຫວດັ່ງກ່າວ, ກະຊວງການຕ່າງປະເທດ ສປປ ເກົາຫຼີ ໄດ້ອອກຖະແຫຼງການຕອບໂຕ້ ໃນວັນທີ 02/02/2023 ວ່າ ສະຖານະການທາງດ້ານການເມືອງ, ການທະຫານຢູ່ແຫຼມເກົາຫຼີ ແລະ ພາກພື້ນ ແມ່ນຢູ່ໃນຂັ້ນຮ້າຍແຮງ ຍ້ອນການຊ້ອມຮົບແບບປະເຊີນໜ້າຂອງອາເມລິກາທີ່ມີຂະໜາດ ແລະ ຂອບເຂດຫຼາຍທີ່ສຸດ, ໄດ້ດໍາເນີນນະໂຍບາຍທີ່ເປັນສັດຕູ ແລະ ບັງຄັບໃຊ້ອາວຸດຍຸດໂທປະກອນ ຕໍ່ ສປປ ເກົາຫຼີ. ສປປ ເກົາຫຼີ ຈະບໍ່ພົວພັນ ຫຼື ເຈລະຈາໃດໆກັບອາເມລິກາ ຖ້າຫາກອາເມລິກາ ຍັງດໍາເນີນນະໂຍບາຍທີ່ເປັນສັດຕູ ແລະ ປະເຊີນໜ້າກັບ ສປປ ເກົາຫຼີ ຄືປັດຈຸບັນນີ້. ສປປ ເກົາຫຼີ ມີສິດປົກປ້ອງສັນຕິພາບ ແລະ ຄວາມໝັ້ນ

ຄິງຢູ່ແຫຼມເກົາຫຼີ ແລະ ພາກພື້ນຢ່າງມີຄວາມຮັບຜິດຊອບ ແລະ ໄດ້ທົດລອງຍິງລູກສອນໄຟ ICBM Hwason-15 ຈຳນວນ 2 ລູກ ຕົກໃສ່ທະເລຕາເວັນອອກ ເພື່ອຕອບໂຕ້ບັນດາປະເທດທີ່ເຄື່ອນໄຫວເປັນໄພຂົ່ມຂູ່ຕໍ່ ສປປ ເກົາຫຼີ.

-ວັນທີ 28/01/2023, ລັດຖະບານທະຫານມຽນມາ ໄດ້ປະກາດຂໍ້ກຳນົດທີ່ເຂັ້ມງວດກັບບັນດາພັກການເມືອງທີ່ຈະລົງສະໝັກເລືອກຕັ້ງໃນປີ 2023 ໃນນັ້ນ ແມ່ນໄດ້ກຳນົດໃຫ້ ແຕ່ລະພັກ ຕ້ອງມີສະມາຊິກພັກຂອງຕົນ 100,000 ຄົນ, ຊຶ່ງຂໍ້ກຳນົດກ່ອນໜ້ານີ້ ມີພຽງ 1.000 ຄົນ. ພ້ອມນີ້, ລັດຖະບານມຽນມາ ໄດ້ປະກາດເລີ່ມການຈັດການເລືອກຕັ້ງທົ່ວໄປໃນເດືອນສິງຫາ 2023 ນີ້. ລັດຖະບານທະຫານມຽນມາ ຍັງຖືກເຊື້ອເຊີນໃຫ້ເຂົ້າຮ່ວມກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນ (ADMM-Plus) ທີ່ມີອາເມລິກາ ແລະ ໄທ ເປັນປະທານຮ່ວມ, ຊຶ່ງໄດ້ດຳເນີນແຕ່ວັນທີ 20-24/02/2023. ຂະນະທີ່ ອົດສະຕຣາລີ ໄດ້ອອກມາດຕະການລົງໂທດດ້ານການເງິນ ແລະ ຂຶ້ນບັນຊີດຳຕໍ່ສະມາຊິກສະພາບໍລິຫານແຫ່ງລັດມຽນມາ ຈຳນວນ 16 ຄົນ.

-ວັນທີ 06/02/2023, ອິນໂດເນເຊຍ ໄດ້ເປັນເຈົ້າພາບຈັດກອງປະຊຸມຄະນະລັດຖະມົນຕີປະສານງານອາຊຽນ ຄັ້ງທີ 32 ແລະ ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ. ກອງປະຊຸມ ໄດ້ເຫັນດີຈະຮັກສາຄວາມເປັນກາງ ແລະ ຄວາມເປັນເອກະພາບໃນການຮັບມືກັບວິກິດການການເມືອງມຽນມາ, ການຈັດຕັ້ງປະຕິບັດມະຕິ 5 ຂໍ້ຂອງອາຊຽນ, ເພີ່ມທະວີການມີສ່ວນຮ່ວມກັບທຸກຝ່າຍໃນລັກສະນະກວມລວມ, ຜ່ອນສັ້ນຜ່ອນຍາວ ແລະ ສອດຄ່ອງກັບກົດບັດອາຊຽນ. ກອງປະຊຸມ ໄດ້ແຕ່ງຕັ້ງລັດຖະມົນຕີຕ່າງປະເທດອິນໂດເນເຊຍ ເປັນທູດພິເສດຂອງອາຊຽນຄົນໃໝ່ ແລະ ສ້າງຕັ້ງສຳນັກງານທູດພິເສດກ່ຽວກັບການແກ້ໄຂບັນຫາມຽນມາ. ພ້ອມນັ້ນ, ໄດ້ຮຽກຮ້ອງໃຫ້ມຽນມາຢຸດຕິຄວາມຮຸນແຮງ ແລະ ຈັດການເຈລະຈາຜ່ານກົນໄກອາຊຽນ. ຂະນະທີ່, ລັດຖະບານທະຫານມຽນມາ ໄດ້ປະກາດຂະຫຍາຍເວລາພາວະສຸກເສີນຂອງປະເທດອອກໄປອີກ 6 ເດືອນ, ຕາມລັດຖະທຳມະນູນຂອງມຽນມາ ການປະກາດພາວະສຸກເສີນແມ່ນສາມາດຂະຫຍາຍເວລາໄດ້ສອງຄັ້ງ.

-ວັນທີ 08-12/2/2023, ທ່ານ Ferdinand Marcos Jr, ປະທານາທິບໍດີຟີລິບປິນ ໄດ້ຢ້ຽມຢາມຍີ່ປຸ່ນຢ່າງເປັນທາງການ. ສອງຝ່າຍໄດ້ລົງນາມໃນຂໍ້ຕົກລົງສຳຄັນ 07 ສະບັບ ເພື່ອແນ່ໃສ່ຊຸກຍູ້ການຮ່ວມມືດ້ານເສດຖະກິດ ແລະ ການປ້ອງກັນຊາດ. ໜຶ່ງໃນນັ້ນແມ່ນສົນທິສັນຍາຮ່ວມມືດ້ານປ້ອງກັນຊາດຮອບດ້ານລະຫວ່າງກຳລັງປ້ອງກັນຍີ່ປຸ່ນ ແລະ ກຳລັງປະກອບອາວຸດຟີລິບປິນ ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ບັນດາການຊ້ອມຮົບຮ່ວມກັນກ່ຽວກັບການຊ່ວຍເຫຼືອມະນຸດສະທຳ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກໄພທຳມະຊາດ, ຊຶ່ງຂໍ້ຕົກລົງດັ່ງກ່າວຈະເຮັດໃຫ້ກອງທັບຍີ່ປຸ່ນສາມາດເຄື່ອນໄຫວຢູ່ດິນແດນຂອງຟີລິບປິນໄດ້. ສ່ວນຂໍ້ຕົກລົງອີກ 06 ສະບັບ ແມ່ນການຮ່ວມມືທາງດ້ານຄົມມະນາຄົມຂົນສົ່ງ, ກະສິກຳ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ສື່ມວນຊົນ. ລວມທັງການລົງທຶນຂອງຍີ່ປຸ່ນຢູ່ ຟີລິບປິນ ທີ່ມູນຄ່າ 2,7 ຕື້ໂດລາ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ຄວາມຂັດແຍ່ງໃນອູແກຣນ ຍັງມີທ່າອ່ຽງທະວີຄວາມຮຸນແຮງຂຶ້ນ ໂດຍສະເພາະແມ່ນພາຍຫຼັງທີ່ຫຼາຍປະເທດຕາເວັນຕົກ ໄດ້ສົ່ງອາວຸດໜັກ ໂດຍສະເພາະແມ່ນລົດຖັງຂະໜາດໃຫຍ່ ໄປຊ່ວຍອູແກຣນເພີ່ມຕື່ມ, ຊຶ່ງໃນທ້າຍເດືອນມັງກອນຜ່ານມາ, ອູແກຣນ ໄດ້ໃຊ້ລູກສອນໄຟ ທີ່ໄດ້ຮັບຈາກອາເມລິກາ ໂຈມຕີໃສ່ໂຮງໝໍໃນເມືອງ Novoaydar ໃນແຄວ້ນ Luhanst ທາງພາກຕາເວັນອອກຂອງອູແກຣນ ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 14 ຄົນ ແລະ ບາດເຈັບ 24 ຄົນ, ລັດເຊຍ ໄດ້ກ່າວວ່າເປັນການໂຈມຕີທີ່ມີເປົ້າໝາຍແນໃສ່ພົນລະເມືອງໂດຍກົງ ຖືເປັນອາຊະຍາກຳສົງຄາມທີ່ຮ້າຍແຮງ. ກ່ອນໜ້ານີ້, ອູແກຣນ ກໍໄດ້ນຳໃຊ້ອາວຸດທີ່ສະໜອງໂດຍພັນທະມິດຕາເວັນຕົກ ໂຈມຕີໂຮງໝໍຢູ່ເມືອງ Vasilyevka ພາກພື້ນ Zaporozhye ເຮັດໃຫ້ມີຜູ້ເສຍຊີວິດ 6 ຄົນ ແລະ ບາດເຈັບ 37 ຄົນ. ຂະນະທີ່ ລັດເຊຍ ໄດ້ໂຈມຕີທາງອາກາດ 12 ຄັ້ງ ດ້ວຍລູກສອນໄຟຫຼາຍກວ່າ 100 ລູກ, ດ້ວຍປືນໃຫຍ່ 20 ຄັ້ງ ໃສ່ເມືອງ Kharkiv ແລະ Zaporizhia ແນໃສ່ທຳລາຍໂຄງລ່າງພື້ນຖານ, ຊຶ່ງໄດ້ສ້າງຄວາມເສຍຫາຍໃຫ້ກັບໂຮງງານໄຟຟ້າຫຼາຍກວ່າ 6 ເຂດ ແລະ ເຮັດໃຫ້ໄຟຟ້າດັບເກືອບທົ່ວປະເທດ. ນອກຈາກນັ້ນ, ວັນທີ 21 ກຸມພາ 2023 ຜ່ານມາ, ທ່ານ Putin, ປະທານາທິບໍດີລັດເຊຍ ຍັງໄດ້ຖະແຫຼງຕໍ່ກອງປະຊຸມລັດຖະສະພາລັດເຊຍວ່າ ລັດເຊຍ ຈະໂຈະຊົ່ວຄາວ ໃນການເຂົ້າຮ່ວມສົນທິສັນຍາ ວ່າດ້ວຍການຈຳກັດອາວຸດນິວເຄລຍ New Start ທີ່ລົງນາມກັບອາເມລິກາ ແຕ່ປີ 2010 ເນື່ອງ

ຈາກເຫັນວ່າ ສັນຍາດັ່ງກ່າວ ເປັນການເອື້ອປະໂຫຍດໃຫ້ແກ່ອາເມລິກາພຽງຝ່າຍດຽວ. ທ່ານ Putin ຍັງຢັ້ງຢືນຄືນ ຕໍ່ທີ່ປະຊຸມວ່າ ລັດເຊຍ ຈະສືບຕໍ່ແຜນການປະຕິບັດການພິເສດທາງທະຫານຢູ່ອູແກຣນຕໍ່ໄປ ຈົນກວ່າ ຈະສາມາດປົດປ່ອຍແຄວ້ນ Donest ແລະ Luhanst ໄດ້, ທັງໄດ້ສະແດງຄວາມຂອບໃຈຕໍ່ຄວາມເສຍສະຫຼະຂອງທະຫານ ເພື່ອພາລະກິດຂອງປະເທດຊາດ ແລະ ວ່າ ຈະໃຫ້ການຊ່ວຍເຫຼືອຕໍ່ຄອບຄົວຂອງທະຫານເຕັມທີ່. ພ້ອມຍັງຢໍ້າຕື່ມວ່າ ມາດຕະການຂວໍ້າບາດຂອງຕາເວັນຕົກ ຫວັງໃຫ້ເສດຖະກິດຂອງລັດເຊຍຕົກຕໍ່າ ຈະບໍ່ປະສົບຜົນສໍາເລັດແຕ່ຢ່າງໃດ, ຊຶ່ງເຫັນໄດ້ແຈ້ງແລ້ວວ່າ ມູນຄ່າເສດຖະກິດຂອງລັດເຊຍເພີ່ມຂຶ້ນຢ່າງຕໍ່ເນື່ອງ ຈາກການສົ່ງອອກພະລັງງານຂອງລັດເຊຍທີ່ເພີ່ມສູງຂຶ້ນ, ໜຶ່ງໃນນັ້ນແມ່ນການສົ່ງອອກໄປຍັງ ສປ ຈີນ ທີ່ເພີ່ມຂຶ້ນ ເປັນ 1,7 ລ້ານບາເຣວ ຕໍ່ ວັນ ນັບແຕ່ ສປ ຈີນ ໄດ້ເປີດປະເທດຢ່າງເປັນທາງການ ແຕ່ວັນທີ 8 ມັງກອນ 2023 ເປັນຕົ້ນມາ.

ຂະນະທີ່ ອູແກຣນ ໄດ້ປົດລັດຖະມົນຕີປ້ອງກັນປະເທດ ແລະ ແຕ່ງຕັ້ງ ທ່ານ Kyrylo Budanov, ຫົວໜ້າໜ່ວຍງານສືບຂ່າວລັບຂອງອູແກຣນ (GUR) ເປັນລັດຖະມົນຕີປ້ອງກັນປະເທດຄົນໃໝ່, ທັງໄດ້ປົດ ທ່ານ Ruslan Dziuba, ຮອງຜູ້ບັນຊາການທະຫານ ອອກຈາກຕໍາແໜ່ງ. ຍັງມີເຈົ້າໜ້າທີ່ອູແກຣນຫຼາຍຄົນ ໄດ້ປະກາດລາອອກ ແລະ ຖືກປົດຕໍາແໜ່ງ. ວັນທີ 08/02/2023, ທ່ານ Volodymyr Zelensky, ປະທານາທິບໍດີອູແກຣນ ໄດ້ໄປຢ້ຽມຢາມປະເທດເອີຣົບ ໂດຍສະເພາະອັງກິດ, ຝຣັ່ງ ແລະ ເຢຍລະມັນ ເພື່ອຂໍການຊ່ວຍເຫຼືອເພີ່ມຕື່ມ ໂດຍສະເພາະເຮືອບິນຂັບໄລ່ ແລະ ຂີປະນາວຸດພິໄສໄກ.

ວັນທີ 20 ກຸມພາ 2023 ຜ່ານມາ, ທ່ານ ໂຈ ໄບເດັນ, ປະທານາທິບໍດີອາເມລິກາ ໄດ້ເດີນທາງໄປນະຄອນຫຼວງຂຽບ ຂອງອູແກຣນ ແລະ ພົບກັບ ທ່ານ ເຊເລັນສະກີ, ປະທານາທິບໍດີອູແກຣນ. ຊຶ່ງ ໄດ້ປະກາດການຊ່ວຍເຫຼືອທາງການທະຫານແກ່ອູແກຣນ ເພີ່ມຕື່ມ 500 ລ້ານໂດລາສະຫະລັດ. ຜ່ານມາ, ອາເມລິກາ ໄດ້ຊ່ວຍເຫຼືອທາງທະຫານແກ່ອູແກຣນແລ້ວ ປະມານ 24,000 ລ້ານໂດລາສະຫະລັດ. ຫຼັງຈາກນັ້ນ, ທ່ານ ໂຈ ໄບເດັນ ໄດ້ເດີນທາງໄປຍັງໂປໂລຍ ພົບປະກັບປະທານາທິບໍດີ ອາເລັກຊັນເດີ້, ໄດ້ສະແດງຄວາມຂອບໃຈທີ່ ໂປໂລຍ ຊ່ວຍເຫຼືອທາງທະຫານແກ່ອູແກຣນ ແລະ ໃຫ້ອາເມລິກາ ແລະ ພັນທະມິດ ສາມາດລໍາລຽງອາວຸດ ຜ່ານໂປໂລຍ ໄປຊ່ວຍອູແກຣນ.

**3). ຄວາມຂັດແຍ່ງ ລະຫວ່າງ ອາເມລິກາ ແລະ ສປ ຈີນ**

ວັນທີ 05/02/2023, ກອງທັບອາເມລິກາ ໄດ້ຍິງບາລູນຂອງ ສປ ຈີນ ຕົກລົງນອກແຄມຝັ່ງ South Carolina. ສະຖານທູດອາເມລິກາ ປະຈໍາ ສປ ຈີນ ກໍໄດ້ເຊີນທູຕານຸທູດຕ່າງປະເທດ ເຂົ້າຮັບຟັງການຖະແຫຼງຂ່າວກ່ຽວກັບເຫດຜົນການຍິງບາລູນດັ່ງກ່າວ ໂດຍກ່າວວ່າບັນດາປະເທດອາດຈະຖືກໄພຄຸກຄາມໃນລັກສະນະດຽວກັນ. ເຫດການໃນຄັ້ງນີ້ ໄດ້ເຮັດໃຫ້ການພົວພັນຂອງອາເມລິກາ ແລະ ສປ ຈີນ ກັບມາເຄັ່ງຕຶງອີກຄັ້ງ. ສປ ຈີນ ໄດ້ອອກຖະແຫຼງການວ່າ ບາລູນດັ່ງກ່າວແມ່ນນໍາໃຊ້ສໍາລັບການວິໄຈດ້ານອຸຕຸນິຍົມວິທະຍາເທົ່ານັ້ນ, ບໍ່ມີຄວາມປະສົງລຸກລໍ້ານ່ານຟ້າອາເມລິກາແຕ່ຢ່າງໃດ ການເຂົ້າໃນນ່ານຟ້າດັ່ງກ່າວ ເປັນພຽງອຸບັດເຫດ. ວັນທີ 10/02/2023, ອາເມລິກາ ໄດ້ຂຶ້ນບັນຊີດໍາ 05 ບໍລິສັດ ແລະ ສະຖາບັນວິໄຈ 01 ແຫ່ງ ຂອງ ສປ ຈີນ ທີ່ຖືກກ່າວຫາວ່າພົວພັນກັບການສະໜັບສະໜູນໂຄງການສອດແນມທາງອາກາດຂອງກອງທັບ ສປ ຈີນ, ຊຶ່ງ ອາເມລິກາ ໄດ້ລະບຸວ່າການຂົ່ມຂູ່ຕໍ່ຄວາມໝັ້ນຄົງຂອງອາເມລິກາ ໂດຍການສົ່ງບາລູນສອດແນມຂອງ ສປ ຈີນ ໄດ້ສົ່ງຜົນກະທົບຕໍ່ສາຍພົວພັນຂອງສອງປະເທດເຮັດໃຫ້ແຜນການຢ້ຽມຢາມ ສປ ຈີນ ຂອງລັດຖະມົນຕີຕ່າງປະເທດອາເມລິກາ ຖືກຍົກເລີກໄປກ່ອນ. ຂະນະທີ່, ກະຊວງການຕ່າງປະເທດ ສປ ຈີນ ຖະແຫຼງວ່າ ໄດ້ກວດພົບບາລູນສອດແນມຂອງອາເມລິກາ ທີ່ບິນເຂົ້ານ່ານຟ້າຂອງ ສປ ຈີນ ໂດຍສະເພາະຢູ່ເຂດປົກຄອງຕົນເອງຕິເບດ, ຊິນຈຽງອຸຍກູ ແລະ ເຂດອື່ນໆ ຫຼາຍກວ່າ 10 ຄັ້ງ ໃນປີຜ່ານມາ, ສປ ຈີນ ມີສິດອັນຊອບທໍາໃນການຕອບໂຕ້ຕໍ່ການກະທໍາດັ່ງກ່າວຂອງອາເມລິກາ.

**4). ສະພາບການ ໃນຂົງເຂດຕາເວັນອອກກາງ**

- ວັນທີ 06/02/2023, ເກີດແຜ່ນດິນໄຫວຂະໜາດໃຫຍ່ຢູ່ ຕວັກກີ ແລະ ພາກຕາເວັນຕົກສ່ຽງເໜືອຂອງຊີຣີ ທີ່ມີຂະໜາດຄວາມແຮງການສັ່ນສະເທືອນ 7.8 ຣິກເຕີ ເຮັດໃຫ້ອາຄານ, ບ້ານເຮືອນຈໍານວນຫຼາຍ ໄດ້ຮັບຄວາມເສຍຫາຍໜັກໜ່ວງ. ປັດຈຸບັນ, ມີຜູ້ເສຍຊີວິດຫຼາຍກວ່າ 58,000 ຄົນ. ແຜ່ນດິນໄຫວຄັ້ງນີ້ເປັນເຫດການທີ່ຮຸນແຮງທີ່ສຸດທີ່ເກີດຂຶ້ນໃນຮອບ 100 ປີ ຂອງຕວັກກີ ແລະ ຊີຣີ . ຂະນະທີ່, ທ່ານ Tayyip Erdogan, ປະທານາທິບໍດີຕວັກກີ ໄດ້ກ່າວວ່າເປັນໄພພິບັດຄັ້ງປະຫວັດສາດ ແລະ ໄດ້ປະກາດສະຖານະການສຸກເສີນ 03 ເດືອນ ກວມເອົາ 10 ແຂວງທາງ

ພາກຕາວັນອອກສ່ຽງໃຕ້ຂອງປະເທດ ເພື່ອໃຫ້ການຊ່ວຍເຫຼືອຜູ້ປະສົບໄພ. ປັດຈຸບັນ, ມີຫຼາຍກວ່າ 45 ປະເທດໄດ້ປະກາດໃຫ້ການຊ່ວຍເຫຼືອໃນການຄົ້ນຫາ, ກູ້ໄພ, ອາຫານ ແລະ ຢາປົວພະຍາດ. ພາຍຫຼັງເກີດແຜ່ນດິນໄຫວຮຸນແຮງ, ຄະນະກຳມະການຕັດຕ້ານການຈຳແນກເຊື້ອຊາດຜິວພັນອາເມລິກາ-ອາຣັບ ໄດ້ຮຽກຮ້ອງໃຫ້ອາເມລິກາຍົກເລີກການລົງໂທດຊີຣີ ແຕ່ພຽງຝ່າຍດຽວໃນທັນທີເພື່ອອຳນວຍຄວາມສະດວກໃຫ້ກັບການຊ່ວຍເຫຼືອຊີຣີ ແຕ່ອາເມລິກາ ກ່າວວ່າຈະບໍ່ຄົບຄ້າກັບລັດຖະບານຊີຣີໂດຍກົງ.

- ວັນທີ 29-31/01/2023, ທ່ານ Antony J. Blinken, ລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ເດີນທາງຢ້ຽມຢາມຕາເວັນອອກກາງ ຢ່າງເປັນທາງການ ແລະ ໄດ້ປຶກສາຫາລືກັບຄູ່ຮ່ວມຕຳແໜ່ງອິດສະຣາແອນ, ເອຢິບ ແລະ ປາແລັສຕິນ ກ່ຽວກັບບັນຫາພາກພື້ນ ແລະ ສາກົນ, ຂໍ້ຂັດແຍ່ງລະຫວ່າງອູແກຣນ-ລັດເຊຍ, ການພົວພັນອິດສະຣາແອນ-ປາແລັສຕິນ ແລະ ອື່ນໆ. ໃນການຢ້ຽມຢາມອິດສະຣາແອນ, ທ່ານ Blinken ໄດ້ພົບປະກັບ ທ່ານ Benjamin Netanyahu, ນາຍົກລັດຖະມົນຕີອິດສະຣາແອນ. ສອງຝ່າຍໄດ້ປຶກສາຫາລືກັນໃນຫຼາຍບັນຫາ ໂດຍສະເພາະການຫຼຸດຜ່ອນຄວາມເຄັ່ງຕຶງລະຫວ່າງອິດສະຣາແອນ-ປາແລັສຕິນ, ການພົວພັນລະຫວ່າງອິດສະຣາແອນ-ອີຣານ ແລະ ອື່ນໆ. ພ້ອມນີ້, ທ່ານ Netanyahu ໄດ້ສະເໜີໃຫ້ອາເມລິກາ ຂະຫຍາຍຂໍ້ຕົກລົງ Abraham ທີ່ໄດ້ລົງນາມຮ່ວມກັນໃນປີ 2020 ຮ່ວມກັບ ສະຫະນະຄອນ ເອເມຣັດ ອາຣັບ, ບາເຣນ ແລະ ມາຣົກ ເພື່ອຫຼຸດຜ່ອນຄວາມເຄັ່ງຕຶງລະຫວ່າງອິດສະຣາແອນກັບບັນດາປະເທດອາຣັບ.

- ວັນທີ 30/01/2023, ເກີດເຫດລະເບີດຂ້າຕົວຕາຍ ທີ່ເມືອງ Peshawar, ແຂວງ Khyber Pakhtunkhwa ຂອງປາກິດສະຖານ ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 100 ຄົນ ແລະ ບາດເຈັບ 150 ຄົນ, ຊຶ່ງເຫດການດັ່ງກ່າວເກີດຂຶ້ນໃນຂະນະທີ່ຊາວມຸດສະລິມກຳລັງດຳເນີນພິທີທາງສາສະໜາ ແລະ ເຂດດັ່ງກ່າວເປັນທີ່ຕັ້ງສະຖານທີ່ສຳຄັນຂອງສຳນັກງານໃຫຍ່ຕຳຫຼວດ, ສຳນັກງານແຂວງ. ນອກນີ້, ເຂດດັ່ງກ່າວຍັງເຄີຍຖືກໂຈມຕີຫຼາຍຄັ້ງຈາກກຸ່ມກໍ່ການຮ້າຍຂອງກຸ່ມຕາລີບັນ ທີ່ຢູ່ໃນອາຟະການິດສະຖານ. ປັດຈຸບັນ, ຍັງບໍ່ມີຝ່າຍໃດອອກມາອ້າງຄວາມຮັບຜິດຊອບຕໍ່ເຫດການທີ່ເກີດຂຶ້ນ.

- ວັນທີ 20 ກຸມພາ 2023, ທ່ານ Benjamin Netanyahu, ນາຍົກລັດຖະມົນຕີ ອິດສະລາແອນ ໄດ້ກ່າວຫາອີຣານ ວ່າເປັນຜູ້ໂຈມຕີກຳປັ່ນບັນທຸກນ້ຳມັນ Campo Square ໃນຕົ້ນເດືອນກຸມພາຜ່ານມາ, ໂດຍໃຫ້ຄຳໝັ້ນສັນຍາວ່າ ອິດສະລາແອນ ຈະຕອບໂຕ້ອີຣານຕໍ່ໄປ. ສ່ວນ ທ່ານ Nasser Kanaani, ໂຄສົກກະຊວງການຕ່າງປະເທດອີຣານ ໄດ້ປະຕິເສດຄຳກ່າວອ້າງດັ່ງກ່າວຂອງອິດສະຣາແອນ ແລະວ່າ ຜ່ານມາ ອິດສະຣາແອນ ເປັນຜູ້ບຸກລຸກຄວາມໝັ້ນຄົງຂອງປະເທດອື່ນຕະຫຼອດປະຫວັດສາດຜ່ານມາ. ອີຣານ ແລະ ອິດສະລາແອນ ໄດ້ຂັດແຍ່ງກັນມາເປັນເວລາຫຼາຍປີ. ຫຼາຍແຫຼ່ງຂ່າວ ຍັງໄດ້ລະບຸວ່າ ໃນວັນທີ 18 ກຸມພາ ຜ່ານມາ, ອິດສະລາແອນ ໄດ້ໂຈມຕີທາງອາກາດໃສ່ນະຄອນຫຼວງຂອງ ຊີຣີ ເຮັດໃຫ້ມີຜູ້ເສຍຊີວິດ 5 ຄົນ ແລະ ບາດເຈັບ 15 ຄົນ ແລະ ບໍ່ມີການຖະແຫຼງຕອບໃດໆ ຈາກອິດສະລາແອນ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວຂອງການນຳຂັ້ນສູງ

## 1. ພັກປະຊາຊົນ ປະຕິວັດລາວ ສົ່ງໂທລະເລກອວຍພອນວັນສ້າງຕັ້ງພັກກອມມູນິດຫວຽດນາມ

ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ສົ່ງໂທລະເລກອວຍພອນ ເຖິງ ຄະນະບໍລິຫານງານສູນກາງພັກ ກອມມູນິດຫວຽດນາມ ເນື່ອງໃນໂອກາດວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ຄົບຮອບ 93 ປີ, ຊຶ່ງເນື້ອໃນຂອງໂທລະເລກອວຍພອນ ມີດັ່ງນີ້:

ເນື່ອງໃນໂອກາດວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ຄົບຮອບ 93 ປີ (03/02/1930 – 03/2/2023), ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ແລະ ສະມາຊິກພັກ ພ້ອມດ້ວຍປະຊາຊົນລາວບັນດາເຜົ່າ ຂໍສົ່ງຄວາມຊົມເຊີຍອັນອົບອຸ່ນ ແລະ ອວຍພອນໄຊອັນປະເສີດ, ນ້ຳໃຈສາມັກຄີ ແລະ ໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງ ທີ່ສະໜິດສະໜົມມາຍັງ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະມາຊິກພັກ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທຸກຖ້ວນໜ້າ.

ພວກຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ເຫັນວ່າ ໃນຕະຫຼອດໄລຍະ 93 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ເຂັ້ມແຂງຂອງຕົນ, ພັກກອມມູນິດຫວຽດນາມ ທີ່ມີກຽດສະຫງ່າ ຊຶ່ງໄດ້ຮັບການສ້າງຕັ້ງ ແລະ ອົບຮົມສັ່ງສອນໂດຍ ປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່, ໄດ້ແບກຫາບພາລະກຳປະຫັວດສາດ ເຮັດສຳເລັດພາລະກິດປົດປ່ອຍ ແລະ ທ້ອນໂຮມປະເທດຊາດ ແລະ ສືບຕໍ່ສ້າງສາພັດທະນາປະເທດຊາດ ສູ່ຈຸດໝາຍສັງຄົມນິຍົມ; ລິເລີ່ມ ແລະ ນຳພາພາລະກິດປ່ຽນແປງໃໝ່ຢ່າງປະດິດສ້າງ, ສາມາດຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ, ມີຄວາມໝາຍປະຫວັດສາດ ອັນເຮັດໃຫ້ ສສ ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ມີຜົນສຳເລັດໃນການປ້ອງກັນ, ຄວບຄຸມພະຍາດ ແລະ ຟື້ນຟູການພັດທະນາເສດຖະກິດ-ສັງຄົມ, ສ້າງພື້ນຖານເສດຖະກິດ ເອກະລາດ, ເປັນເຈົ້າຕົນເອງ ໂດຍຕິດພັນກັບຄວາມເປັນເຈົ້າການ, ຕັ້ງໜ້າເຊື່ອມໂຍງສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ, ອັນໄດ້ເຮັດໃຫ້ຕົວເລກການຂະຫຍາຍຕົວເສດຖະກິດ ເພີ່ມສູງຂຶ້ນ ແລະ ນຳໜ້າຢູ່ໃນພາກພື້ນ ແລະ ໃນໂລກ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກສູງຂຶ້ນເປັນກ້າວໆ.

ໃນຖານະເພື່ອນສະຫາຍອ້າຍນ້ອງ ທີ່ໃກ້ຊິດສະໜິດສະໜົມ, ພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ແລະ ຕີລາຄາສູງຕໍ່ຜົນສຳເລັດ ແລະ ໄຊຊະນະອັນໃຫຍ່ຫຼວງ, ຮອບດ້ານ ທີ່ພັກກອມມູນິດຫວຽດນາມ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຍາດມາໄດ້ຕະຫຼອດໄລຍະຜ່ານມາ ແລະ ຖືສິ່ງດັ່ງກ່າວເປັນບົດຮຽນອັນລ້ຳຄ່າ, ເປັນກຳລັງໃຈອັນແຮງກ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງຕົນ. ພວກຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງ ພັກກອມມູນິດຫວຽດນາມ ທີ່ມີສະຫາຍເລຂາທິການໃຫຍ່ ຫງວຽນຟູຈ້ອງ ເປັນຜູ້ນຳໜ້ານັ້ນ, ປະຊາຊົນຫວຽດນາມອ້າຍນ້ອງ ຈະສືບຕໍ່ຍາດໄດ້ໄຊຊະນະ ແລະ ຜົນສຳເລັດໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນການປະຕິບັດບັນດາມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກ ບັນລຸຄາດໝາຍທີ່ວາງອອກຢ່າງມີໄຊ.

ພວກຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ລາວ-ຫວຽດນາມ ທີ່ບັນດາຜູ້ນຳຮຸ່ນທຳອິດ, ພັກ, ລັດ ຂອງສອງຊາດ ລາວ -ຫວຽດນາມ ໄດ້ກໍ່ຕັ້ງ, ຖະນຸຖະໜອມ ແລະ ເຝິກຝົນຫຼໍ່ຫຼອມ ໂດຍຜ່ານການທົດສອບບົນແປວໄຟປະຕິວັດ ເປັນເວລາຫຼາຍທົດສະວັດນັ້ນ ໄດ້ກາຍເປັນມໍລະດົກອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວ, ເປັນໜຶ່ງໃນປັດໄຈຕັດສິນໄຊຊະນະຂອງການປະຕິວັດຢູ່ແຕ່ລະປະເທດ ແລະ ມາເຖິງປະຈຸບັນຍິ່ງໄດ້ຮັບການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍດ້ວຍທ່ວງທ່າທີ່ຕັ້ງໜ້າ, ນັບມື້ກ້າວເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ ແລະ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ, ນຳເອົາຜົນປະໂຫຍດຕົວຈິງມາສູ່ພາລະກິດປະຕິວັດ ກໍ່ຄືປະຊາຊົນສອງຊາດ ລາວ-ຫວຽດນາມ. ພວກຂ້າພະເຈົ້າ ຈະສືບຕໍ່ຮ່ວມກັບ ສະຫາຍຫວຽດນາມ ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອຄວາມສາມັກຄີພິເສດ ລາວ -ຫວຽດນາມ ໃຫ້ໝັ້ນຄົງ ແລະ ເກີດດອກອອກຜົນຍິ່ງໆຂຶ້ນຕະຫຼອດໄປ, ປະກອບສ່ວນເຂົ້າໃນພາລະກິດເສີມສ້າງສັນຕິພາບ, ມິດຕະພາບ, ການຮ່ວມມື ແລະ ການພັດທະນາ ໃນພາກພື້ນ ແລະ ໃນໂລກ.

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບອົກຂອບໃຈ ແລະ ຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ, ທັນການ ແລະ ມີປະສິດທິຜົນ ແກ່ພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄື ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປະຈຸບັນຂອງປະຊາຊົນລາວພວກຂ້າພະເຈົ້າ.

ເນື່ອງໃນໂອກາດອັນມີຄວາມໝາຍສຳຄັນນີ້, ພວກຂ້າພະເຈົ້າ ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ຈົ່ງຂຽວສົດງົດງາມ ແລະ ໝັ້ນຄົງຂະໜົງແກ່ນຕະຫຼອດການະນານ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ກໍໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ເລຮວາຍຈຸງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ເຊັ່ນດຽວກັນ.

## 2. ກອງປະຊຸມສຸດຍອດ ລະຫວ່າງ ພັກປະຊາຊົນ ປະຕິວັດລາວ ແລະ ພັກປະຊາຊົນ ກຳປູເຈຍ



ວັນທີ 14 ກຸມພາ 2023, ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ, ປະທານພັກ ປະຊາຊົນ ກຳປູເຈຍ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງພັກ ປະຊາຊົນ ກຳປູເຈຍ ໄດ້ເດີນທາງມາຮ່ວມກອງປະຊຸມສຸດຍອດ ລະຫວ່າງ ພັກປະຊາຊົນ ປະຕິວັດລາວ ແລະ ພັກປະຊາຊົນ ກຳປູເຈຍ ທີ່ ນະຄອນຫຼວງວຽງຈັນ. ກອງປະຊຸມສຸດຍອດດັ່ງກ່າວ ເປັນກົນໄກໜຶ່ງທີ່ສຳຄັນໃນການພົວພັນຮ່ວມມືລະຫວ່າງ 2 ພັກ ກໍຄື 2 ປະເທດ ລາວ-ກຳປູເຈຍ ປະກອບສ່ວນສຳຄັນເຮັດໃຫ້ສາຍພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມື ແບບຄູ່ຮ່ວມຍຸດທະສາດ ຮອບດ້ານ ໝັ້ນຄົງ ຍາວນານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກຳປູເຈຍ ນັບມື້ນັບແຕກດອກອອກຜົນຍິ່ງໆຂຶ້ນ.

ສະຫາຍເລຂາທິການໃຫຍ່ ພັກ ປປ ລາວ ໄດ້ຕາງໜ້າໃຫ້ສູນກາງພັກ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຊົມເຊີຍ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ ແລະ ຮອບດ້ານ ທີ່ ປະຊາຊົນ ກຳປູເຈຍ ຍາດມາໄດ້ ໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດ ໃນຕະຫຼອດໄລຍະຜ່ານມາ ກໍ່ຄື ການສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ພາຍໃຕ້ການຊີ້ນຳ-ນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງ ພັກປະຊາຊົນ ກຳປູເຈຍ ອັນມີ ສົມເດັດ ເຕໂຈ ຮຸນແຊນ ເປັນປະທານ, ໂດຍສະເພາະ ບັນດາໝາກຜົນໃນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈ ກອງປະຊຸມສູນກາງພັກ ຄັ້ງທີ 43 ສະໄໝທີ V ຂອງພັກປະຊາຊົນ ກຳປູເຈຍ ກໍຄື ໄຊຊະນະ

ອັນໃຫຍ່ຫຼວງໃນການເລືອກຕັ້ງສະມາຊິກສະພາທ້ອງຖິ່ນ, ຜົນສຳເລັດການເປັນປະທານໝູນວຽນອາຊຽນ ໃນປີ 2022 ຜ່ານມາ ແລະ ຜົນສຳເລັດກອງປະຊຸມໃຫຍ່ວິສາມັນຜູ້ແທນທົ່ວປະເທດ ຂອງພັກປະຊາຊົນ ກຳປູເຈຍ ໃນທ້າຍເດືອນມັງກອນ ຜ່ານມາ.

ພາຍໃຕ້ບັນຍາກາດແຫ່ງໄມຕີຈິດມິດຕະພາບ, ສອງຝ່າຍ ໄດ້ພ້ອມກັນສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຜົນສຳເລັດການພົບປະ ລະຫວ່າງ ສອງນາຍົກລັດຖະມົນຕີ ລາວ-ກຳປູເຈຍ ກໍຄື ການເຂົ້າຮ່ວມກອງປະຊຸມສຸດຍອດຂອງ ສົມເດັດ ຮຸນແຊນ ໃນຄັ້ງນີ້. ພະນະທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫ່ຍ ພັກ ປປ ລາວ ແລະ ສົມເດັດ ຮຸນແຊນ, ປະທານພັກ ປະຊາຊົນ ກຳປູເຈຍ ໄດ້ເປັນເອກະພາບ ແລະ ຍິນດີຮ່ວມກັນ ສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນເພື່ອຊຸກຍູ້ເສີມຂະຫຍາຍການພົວພັນ ລະຫວ່າງ ສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກຳປູເຈຍ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ແລະ ນຳເອົາຜົນປະໂຫຍດຕົວຈິງນັບມື້ນັບຫຼາຍຂຶ້ນ ມາສູ່ປະຊາຊົນສອງຊາດ ລາວ-ກຳປູເຈຍ, ປະກອບສ່ວນເຂົ້າໃນການເສີມສ້າງສັນຕິພາບ, ການຮ່ວມມື ແລະ ການພັດທະນາໃນພາກພື້ນ ແລະ ໃນໂລກ. ຜູ້ນຳຂອງສອງພັກ ຍັງໄດ້ເປັນສັກຂີພິຍານການລົງນາມ ເອກະສານຮ່ວມມືສອງພັກ 2 ສະບັບ.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ກອງປະຊຸມພົບປະ ລະຫວ່າງ ຄຕພ ລາວ ແລະ ຫວຽດນາມ




ວັນທີ 22 ກຸມພາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ພ້ອມດ້ວຍຄະນະ ໄດ້ພົບປະເຮັດວຽກສອງຝ່າຍກັບ ສະຫາຍ ເລຮວາຍຈຸງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະ, ສອງຝ່າຍ ໄດ້ຮ່ວມກັນຕີລາຄາໝາກຜົນການພົວພັນຮ່ວມມື ໃນໄລຍະຜ່ານມາ ແລະ ກຳນົດທິດທາງໃນຕໍ່ໜ້າ, ຖອດຖອນບົດຮຽນ ແລະ ແລກປ່ຽນທັດສະນະຕໍ່ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ ທີ່ສອງຝ່າຍມີຄວາມສົນໃຈ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕີລາຄາສູງ ຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງ ສະຫາຍ ເລຮວາຍຈຸງ ພ້ອມດ້ວຍຄະນະໃນຄັ້ງນີ້, ເຊິ່ງເປັນການຢ້ຽມຢາມທາງການຄັ້ງທຳອິດໃນຖານະເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ກອມມູນິດຫວຽດນາມ, ເປັນການຜັນຂະຫຍາຍຂໍ້ຕົກລົງການຮ່ວມມືສອງຝ່າຍ, ທັງເປັນການສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ໃນການສືບຕໍ່ຮັດແໜ້ນ ແລະ ເພີ່ມທະວີສາຍພົວພັນອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ລາວ-ຫວຽດນາມ ກໍຄື ຮັດແໜ້ນ ແລະ ເພີ່ມທະວີການພົວພັນຮ່ວມມື ລະຫວ່າງຄະນະພົວພັນຕ່າງປະເທດຂອງສອງສູນກາງພັກ ລາວ-ຫວຽດນາມ. ສອງຝ່າຍ ຍັງໄດ້ແຈ້ງໃຫ້ກັນຊາບ ສະພາບພົ້ນເດັ່ນຂອງແຕ່ລະພັກ, ແຕ່ລະປະເທດ; ຕີລາຄາສູງການປະສານສົມທົບຢ່າງແໜ້ນແຟ້ນ ໃນການເປັນເສນາທິການໃຫ້ແກ່ສອງສູນກາງພັກ ລາວ-ຫວຽດນາມ ໃນການກະກຽມແກ່ການຢ້ຽມຢາມ ແລະ ພົບປະລະຫວ່າງການນຳຂັ້ນສູງຂອງສອງພັກ, ສອງລັດ; ການປະສານສົມທົບໃນການຈັດຕັ້ງກິດຈະກຳການ ເຄື່ອນໄຫວສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ການຈັດຊຸດບຳລຸງສ້າງໃຫ້ແກ່ພະນັກງານຂັ້ນຕ່າງໆຂອງລາວ; ການແລກປ່ຽນບົດຮຽນທາງດ້ານທິດສະດີ ແລະ ພຶດຕິກຳ, ການຖອດຖອນບົດຮຽນໃນການພັດທະນາເສດຖະກິດ - ສັງຄົມ, ການຊຸກຍູ້ການໄປມາຫາສູ່ກັນລະຫວ່າງປະຊາຊົນສອງຊາດ ລາວ-ຫວຽດນາມ ແລະ ອື່ນໆ. ສອງຝ່າຍ ເປັນເອກະພາບສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນ ໃນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງການຮ່ວມມືສອງຝ່າຍ ໄລຍະ 2021 - 2025; ສືບຕໍ່ຮັກສາກົນໄກການຢ້ຽມຢາມ ແລກປ່ຽນຄະນະຜູ້ແທນຂັ້ນສູງ ເຊິ່ງກັນ ແລະ ກັນ, ແລກປ່ຽນບົດຮຽນ ແລະ ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ ທີ່ສອງຝ່າຍມີຄວາມສົນໃຈ; ເປັນເຈົ້າການໃນການ ຕິດຕາມ, ກວດກາ, ແນະນຳ ແລະ ຊຸກຍູ້ ບັນດາຄະນະຂອງສູນກາງພັກ, ກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ ບັນດາຂໍ້ຕົກລົງການຮ່ວມມື ລະຫວ່າງ ການນຳຂັ້ນສູງຂອງ ສອງພັກ, ສອງລັດ, ບັນດາຖະແຫຼງການຮ່ວມ, ສັນຍາການຮ່ວມ

ມື ໃນແຕ່ລະໄລຍະຂອງສອງລັດຖະບານ; ປະສານສົມທົບໃນວຽກງານບຳລຸງສ້າງພະນັກງານຂັ້ນຕ່າງໆຂອງລາວ, ການຈັດກອງປະຊຸມສຳມະນາ, ແລກປ່ຽນບົດຮຽນທາງດ້ານທິດສະດີ - ພຶດຕິກຳ ແລະ ອື່ນໆ, ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ແລະ ເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສະມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ລອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ນັບກ້າວສູ່ລວງເລິກໃນທຸກຂົງເຂດວຽກງານ ແລະ ຂະແໜງການ, ນຳເອົາຜົນປະໂຫຍດອັນແທ້ຈິງມາສູ່ປະຊາຊົນສອງຊາດ ລາວ-ຫວຽດນາມໃຫ້ນັບມື້ຫຼາຍຂຶ້ນ, ປະກອບສ່ວນເຂົ້າໃນພາລະກິດເສີມສ້າງ ສັນຕິພາບ, ມິດຕະພາບ, ການຮ່ວມມື ແລະ ພັດທະນາໃນພາກພື້ນ ແລະ ສາກົນ.

## 2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ເອກອັກຄະລາຊາທູດວິສາມັນ ແຫ່ງຣາຊະອານາຈັກ ກຳປູເຈຍ ປະຈຳ ສປປ ລາວ



ວັນທີ 7 ກຸມພາ 2023, ທີ່ ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ທ່ານ ນາງ ທອງ ສຸກົນເທຍຣີ, ເອກອັກຄະລາຊາທູດວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ຣາຊະອານາຈັກ ກຳປູເຈຍປະຈຳ ສປປ ລາວ. ຊຶ່ງທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບການມາຢ້ຽມຢາມ ຂອງເອກອັກຄະຣາຖະທູດ ນາງ ທອງ ສຸກົນເທຍຣີ ແລະ ຊົມເຊີຍ ຕໍ່ການມາປະຕິບັດໜ້າທີ່ການທູດຢູ່ລາວ ໃນການເປັນຂົວເຊື່ອມມິດຕະພາບ ລາວ-ກຳປູເຈຍ ໃນຕະຫຼອດໄລຍະຜ່ານມາ, ເຊິ່ງໄດ້ປະກອບສ່ວນສຳຄັນ ເຂົ້າໃນການເສີມຂະຫຍາຍ ສາຍພົວພັນມິດຕະພາບ ອັນເປັນມູນເຊື້ອທີ່ດີງາມ ລະຫວ່າງ ລາວ-ກຳປູເຈຍ ຕາມທິດຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ໃຫ້ນັບມື້ນັບໄດ້ຮັບການເສີມຂະຫຍາຍ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ຕໍ່ບັນດາຜົນສຳເລັດອັນໃຫ່ຍຫຼວງ ແລະຮອບດ້ານ ທີ່ປະຊາຊົນ ກຳປູເຈຍ ຍາດມາໄດ້ ໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດ ກໍຄື ການສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ໃນຕະຫຼອດໄລຍະຜ່ານມາ ໂດຍສະເພາະຜົນສຳເລັດໃນການເປັນປະທານໜູນວຽນອາຊຽນ ໃນປີ 2022. ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຊ່ວຍເຫຼືອ ສປປລາວ ໃນການຕ້ານກັບພະຍາດໂຄວິດ-19.

ສອງຝ່າຍໄດ້ເປັນເອກະພາບ ແລະ ຍິນດີຮ່ວມກັນ ສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ຄະນະພົວພັນຕ່າງປະເທດສູກາງພັກ ແລະ ສະຖານທູດ ຣາຊະອານາຈັກກຳປູເຈຍ ປະຈຳ ສປປ ລາວ ໃນການເປັນຂົວເຊື່ອມມິດຕະພາບ ເພື່ອປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍພົວພັນມິດຕະພາບ ອັນເປັນມູນເຊື້ອ

ທີ່ດີງາມ ລະຫວ່າງ ສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກຳປູເຈຍ ໃຫ້ແຕກດອກອອກຜົນ ແລະ ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ-ກຳປູເຈຍ ໃຫ້ຫຼາຍຂຶ້ນ.

**3. ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າອວຍພອນສະຖານເອກອັກຄະລັດຖະທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ**



ເນື່ອງໃນໂອກາດ ວັນສ້າງຕັ້ງພັກ ກອມມູນິດຫວຽດນາມ ຄົບຮອບ 93 ປີ (3/2/1930–3/2/2023), ວັນທີ 01 ກຸມພາ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະເຂົ້າອວຍພອນ ສະຫາຍເອກອັກຄະລັດຖະທູດ ຫງວຽນບ໋າຮຸ່ງ ແລະ ພະນັກງານສະຖານທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ. ສະຫາຍ ສົມພອນ ສີຈະເລີນ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ ແລະ ຮອບດ້ານ ທີ່ ປະຊາຊົນຫວຽດນາມອ້າຍນ້ອງ ຍາດມາໄດ້ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ ໃນຕະຫຼອດໄລຍະທີ່ຜ່ານມາ, ອັນໄດ້ເຮັດໃຫ້ ສສ ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ສ້າງພື້ນຖານເສດຖະກິດທີ່ເປັນເອກະລາດ, ເປັນເຈົ້າຕົນເອງ ແລະ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເພີ່ມສູງຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ; ໄດ້ສະແດງຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ລາວ-ຫວຽດນາມ ທີ່ໄດ້ຮັບການກໍ່ຕັ້ງໂດຍ ປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ທີ່ເຄົາລົບຮັກ ແລະ ສືບຕໍ່ໄດ້ຮັບການຖະນຸຖະໜອມ ແລະ ເພີ່ມພູນຄູນສ້າງ ຈາກບັນດາຮຸ່ນການນຳຂອງສອງປະເທດ ໂດຍຜ່ານການທົດສອບບົນແປວໄຟປະຕິວັດ ເປັນເວລາຫຼາຍທົດສະວັດນັ້ນ ໄດ້ກາຍເປັນມໍລະດົກອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວ, ເປັນໜຶ່ງໃນປັດໄຈຕັດສິນໄຊຊະນະ ຂອງການປະຕິວັດ ໃນແຕ່ລະປະເທດ ແລະ ມາເຖິງປັດຈຸບັນ ຍິ່ງໄດ້ຮັບການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍເຂົ້າສູ່ລວງເລິກ ໃນທຸກຂົງເຂດວຽກງານ ແລະ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ, ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ-ຫວຽດນາມ, ພ້ອມທັງຢືນຢັນວ່າຈະຮ່ວມກັບ ສະຫາຍຫວຽດນາມ ພ້ອມກັນສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອຄວາມສາມັກຄີພິເສດ ລາວ-ຫວຽດນາມ ໃຫ້ໝັ້ນຄົງ ແລະ ເກີດດອກອອກຜົນຍິ່ງໆຂຶ້ນຕະຫຼອດໄປ, ປະກອບສ່ວນເຂົ້າໃນພາລະກິດເສີມສ້າງສັນຕິພາບ, ມິດຕະພາບ, ການຮ່ວມມື ແລະ ການພັດທະນາ ໃນພາກພື້ນ ແລະ ໃນໂລກ.

### 4. ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022




ວັນທີ 17 ກຸມພາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງຕົນໃນປີ 2022 ຜ່ານມາ, ໂດຍການເປັນປະທານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ມີຄະນະພັກ-ຄະນະນຳ, ຄະນະກົມ, ພະນັກງານອາວຸໂສບຳນານ ຕະຫຼອດເຖິງ ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການສະຫຼຸບຕີລາຄາ ກ່ຽວກັບ ການປະຕິບັດວຽກງານ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ໃນໄລຍະ 1 ປີ ຜ່ານມາ, ໂດຍໄດ້ຍົກໃຫ້ເຫັນຜົນງານທີ່ຍາດມາໄດ້, ບາງດ້ານທີ່ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້; ກອງປະຊຸມຍັງໄດ້ເປີດໂອກາດໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມປະກອບຄວາມຄິດເຫັນເຂົ້າໃສ່ບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ ແລະ ເປັນເອກະພາບວາງທິດທາງແຜນການ ແລະ ຄາດໝາຍສູ້ຊົນສຳລັບປີ 2023; ໃນໂອກາດດຽວກັນກໍໄດ້ສະຫຼຸບຂະບວນການແຂ່ງຂັນຍ້ອງຍໍຜົນງານ 5 ປີ (2016-2020) ແລະ ປະກາດເນື້ອໃນການແຂ່ງຂັນຮອດປີ 2025.

ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດ ທີ່ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກ ຍາດມາໄດ້ໃນຕະຫຼອດໄລຍະຜ່ານມາ, ໂດຍສະເພາະແມ່ນ ການເຮັດສຳເລັດພາລະບົດບາດ ເປັນເສນາທິການໃຫ້ແກ່ສູນກາງພັກ ໃນການເຄື່ອນໄຫວຕ່າງປະເທດດ້ານພັກ ແລະ ການທູດປະຊາຊົນ ອັນໄດ້ເຮັດໃຫ້ບົດບາດອິດທິພົນຂອງພັກ-ລັດ ເຮົາໄດ້ຮັບການຍົກສູງໃນເວທີພາກພື້ນ ແລະ ສາກົນ, ຊຶ່ງໄດ້ເຮັດໃຫ້ຂັ້ນເທິງໃຫ້ການຍ້ອງຍໍປະເພດຕ່າງໆ ເຊັ່ນ: ຫຼຽນໄຊແຮງງານຊັ້ນ I ສຳລັບ ກົມກອງລວມໝູ່ 1 ຫຼຽນ, ສຳລັບບຸກຄົນ 7 ສະຫາຍ, ຍິງ 3 ສະຫາຍ; ຫຼຽນໄຊແຮງງານຊັ້ນ II 10 ສະຫາຍ, ຍິງ 3 ສະຫາຍ; ຫຼຽນໄຊແຮງງານຊັ້ນ III 28 ສະຫາຍ, ຍິງ 6 ສະຫາຍ; ຫຼຽນກາແຮງງານ 20 ສະຫາຍ, ຍິງ 7 ສະຫາຍ; ໄດ້ຮັບໃບຍ້ອງຍໍຂັ້ນລັດຖະບານ 35 ສະຫາຍ, ຍິງ 13 ສະຫາຍ. ສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມເຊື່ອໝັ້ນວ່າດ້ວຍຈິດໃຈມານະບຸກບືນ, ຄວາມສາມັກຄີເປັນເອກະພາບພາຍໃນ ຈະເຮັດໃຫ້ການປະຕິບັດໜ້າທີ່ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ສືບຕໍ່ຍາດໄດ້ຜົນສຳເລັດໃໝ່ໃຫຍ່ກວ່າເກົ່າ, ສືບຕໍ່ສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດໃນຕໍ່ໜ້າ ແລະ ພ້ອມກັນສ້າງຜົນງານຂ່ຳນັບຮັບຕ້ອນວັນສ້າງຕັ້ງຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ ໃນເດືອນມິຖຸນາ 2023 ທີ່ຈະມາເຖິງນີ້ ໃຫ້ເປັນຂະບວນຟົດຟື້ນ.

**5. ກອງປະຊຸມປາຖະກະຖາ ແລະ ປະກາດໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີ 2022**



ວັນທີ 23 ກຸມພາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດການເຜີຍແຜ່ເອກະສານ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 93 ປີ (03/02/1930-03/02/2023); ວັນສ້າງຕັ້ງກຳມະບານລາວ ຄົບຮອບ 67 ປີ (01/02/1956-03/02/2023) ແລະ ປະກາດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ເຊິ່ງໃຫ້ກຽດເປັນປະທານໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາຄະນະພັກ, ຄະນະກົມ, ພະແນກ ແລະ ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກເຂົ້າຮ່ວມຢ່າງພ້ອມພຽງ. ປະທານກອງປະຊຸມ ໄດ້ຍົກໃຫ້ເຫັນຕົ້ນກຳເນີດ ແລະ ປະຫວັດຄວາມເປັນມາຂອງພັກ ກອມມູນິດຫວຽດນາມ ນັບຕັ້ງແຕ່ທ້າຍສັດຕະວັດທີ XIX ຫາ ຕົ້ນສັດຕະວັດທີ XX ທີ່ພວກລ່າເມືອງຂຶ້ນຝຣັ່ງ ໄດ້ຍຶດຄອງ ຫວຽດນາມ ເປັນຫົວເມືອງຂຶ້ນ, ແຕ່ດ້ວຍນ້ຳໃຈຮັກຊາດ ແລະ ຄຽດແຄ້ນຕໍ່ພວກລ່າເມືອງຂຶ້ນຜູ້ຮຸກຮານ, ປະຊາຊົນຫວຽດນາມ ໄດ້ພ້ອມກັນຕໍ່ສູ້ບໍ່ຍອມຈຳນົນ ຈົນຮອດ ປີ 1911 ປະທານ ໂຮ່ຈິມິນ ໄດ້ຊອກຫາເສັ້ນທາງປົດປ່ອຍຊາດ ມາຮອດ ປີ 1929 ຫງວຽນ ອາຍ ກວັກ ໄດ້ສ້າງຕັ້ງພັກກອມມູນິດອິນດູຈີນຂຶ້ນ ແລະ ຈັດຕັ້ງພັກກອມມູນິດຫວຽດນາມ ຂຶ້ນໃນວັນທີ 03/02/1930 ແລະ ໄດ້ນຳພາຍາດໄດ້ໄຊຊະນະຈາກສັດຕູເປັນກ້າວໆມາ; ຍົກໃຫ້ເຫັນຜົນງານການນຳພາຂອງພັກກອມມູນິດ ຫວຽດນາມ ໃນແຕ່ລະໄລຍະ ແລະ ການພົວພັນຮ່ວມມື-ຄວາມສາມັກຄີພິເສດ-ການຮ່ວມມືຮອບດ້ານ ກັບ ພັກປະຊາຊົນ ປະຕິວັດລາວ ຈົນສາມາດຍາດໄດ້ຮັບເອກະລາດໃນປີ 1975 ເປັນຕົ້ນມາ.

ຫຼັງຈາກນັ້ນ, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າ ຄຕພ ກໍ່ໄດ້ສືບຕໍ່ເຜີຍແຜ່ເອກະສານວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 67 ປີ (01 ກຸມພາ 1956-01 ກຸມພາ 2023) ເຊິ່ງໄດ້ຍົກໃຫ້ເຫັນຕົ້ນກຳເນີດ ແລະ ການເຕີບໃຫຍ່ຂະຫຍາຍຕົວ, ຜົນງານທີ່ພົ້ນເດັ່ນ ແລະ ທິດທາງໃນການພັດທະນາວຽກງານກຳມະບານລາວໃນຕໍ່ໜ້າ. ໃນວັນດຽວກັນ, ໄດ້ຈັດພິທີປະກາດໜ່ວຍພັກ ຫ້ອງການຄະນະພົວພັນຕ່າງປະເທດສູນກາງພັກ ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ເຊິ່ງເປັນຄັ້ງທີ 6.

**6. ສະມາຄົມມິດຕະພາບ ລາວ-ສ ປປ ເກົາຫຼີ ຈັດປາຖະກະຖາວັນຄ້າຍວັນເກີດຂອງຜູ້ນໍາ ສປປ ເກົາຫຼີ**



ວັນທີ 15 ກຸມພາ 2023, ທີ່ວິທະຍາຄານກົມມະດໍາ, ສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ ແລະ ວິທະຍາຄານກົມມະດໍາ ຮ່ວມກັບສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈໍາ ສປປ ລາວ ໄດ້ຈັດພິທີ ປາຖະກະຖາ ເນື່ອງໃນໂອກາດວັນຄ້າຍວັນເກີດ ຂອງ ສະຫາຍ ກິມ ເຈີງ ອິນ, ຜູ້ນໍາທີ່ຍິ່ງໃຫຍ່, ເລຂາທິການໃຫຍ່ພັກ ແຮງງານເກົາຫຼີ ຕະຫຼອດການ, ປະທານຄະນະກໍາມະທິການປ້ອງກັນຊາດແຫ່ງ ສປປ ເກົາຫຼີ ຕະຫຼອດການ ຄົບຮອບ 81 ປີ (16/2/1942 - 16/2/2023) ເຊິ່ງໄດ້ມີການວາງສະແດງຮູບພາບ, ປຶ້ມ, ສາຍວີດີໂອ, ການສະແດງສິລະປະ ຂອງ ສປປ ລາວ ແລະ ສປປ ເກົາຫຼີ ແລະ ປາຖະກະຖາກ່ຽວກັບຜົນງານການນໍາພາຂອງ ສະຫາຍ ກິມ ເຈີງ ອິນ ໃນ ພາລະກິດປົກປັກຮັກສາ ແລະ ສ້າງສາພັດ ທະນາປະເທດຊາດ ສປປ ເກົາຫຼີ ໃນໄລຍະຜ່ານມາ, ໂດຍໃຫ້ກຽດເຂົ້າຮ່ວມ ມີ: ສະຫາຍ ປອ. ອາດສະພັງທອງ ສີພັນດອນ, ກໍາມະການສູນກາງພັກ, ເຈົ້າຄອງນະຄອນຫຼວງວຽງຈັນ, ປະທານ ສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ; ສະຫາຍ ລີ ຢົງ ຊິນ, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມແຫ່ງ ສປປ ເກົາຫຼີ ປະຈໍາ ສປປ ລາວ; ມີບັນດາສະຫາຍການນໍາ, ຄະນະກົມ, ຄະນະພະແນກ, ພະນັກງານ, ນາຍ ແລະ ພົນທະຫານ, ນັກຮຽນນັກສຶກສາ ແລະ ແຂກທີ່ມາຈາກພາກສ່ວນກ່ຽວຂ້ອງ ມີຈໍານວນ ປະມານ 360 ສະຫາຍ.

ໃນພິທີອັນມີຄວາມໝາຍສໍາຄັນນີ້, ສະຫາຍ ລີ ຢົງ ຊິນ, ເອກອັກຄະລັດຖະທູດວິສາມັນ ຜູ້ມີອໍານາດເຕັມ ແຫ່ງ ສປປ ເກົາຫຼີ ປະຈໍາ ສປປ ລາວ ໄດ້ກ່າວຍ້ອງຍໍເຖິງຜົນງານການນໍາພາຂອງ ສະຫາຍ ກິມ ເຈີງ ອິນ, ຜູ້ນໍາທີ່ຍິ່ງ ໃຫຍ່, ເລຂາທິການໃຫຍ່ພັກແຮງງານເກົາຫຼີ ຕະຫຼອດການ, ປະທານຄະນະກໍາມະທິການປ້ອງກັນຊາດແຫ່ງ ສປປ ເກົາຫຼີ ຕະຫຼອດການ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນໄລຍະຜ່ານມາ ແລະ ທິດທາງ ໃນການນໍາພາປະເທດຊາດກ້າວສູ່ປະເທດສັງຄົມນິຍົມຂອງ ສປປ ເກົາຫຼີ ເພື່ອເຮັດໃຫ້ບັນດາສະຫາຍ ທີ່ໄດ້ເຂົ້າຮ່ວມ ພິທີດັ່ງກ່າວ ໄດ້ຮັບຮູ້ ແລະ ເຂົ້າໃຈເຖິງສະພາບການພັດທະນາຂອງ ສປປ ເກົາຫຼີ ພາຍໃຕ້ການນໍາພາ ຂອງພັກ ແຮງ ງານເກົາຫຼີ ບົນເສັ້ນທາງສູ່ຈຸດໝາຍສັງຄົມນິຍົມ, ພ້ອມດຽວກັນນີ້ ກໍ່ຍັງໄດ້ຍົກໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນ ເປັນມູນເຊື້ອ ແລະ ການຮ່ວມມືລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນ ສອງຊາດລາວ ແລະ ສປປ ເກົາຫຼີ ທີ່ໄດ້ ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ໄດ້ຮັບການພັດທະນາເພີ່ມພູນຄູນສ້າງດ້ວຍດີຕະຫຼອດມາ.